ວຽງຈັນໃໝ່
VIENTIANE MAI NEWSPAPER
ນ.ສ.ພ ລາຍວັນ

# ມູນນິທິຟື້ນຟູສຸຂະພາບລາວ ມອບອຸປະກອນການແພດ ໃຫ້ແຂວງຜົ້ງສາລີ



☆ ໂດຍເລັງເຫັນຄວາມຕ້ອງການ ແລະ ຄວາມຂາດແຄນ ເຄື່ອງມືອຸປະກອນການແພດຢູ່ບັນດາ ໂຮງໝໍເມືອງ ແຂວງຜົ້ງສາລີ ໃນ ທ້າຍເດືອນກຸມພາ 2015 ນີ້ ທ່ານ ດຣ. Luc Janssens ປະ ທານມູນນິທິຟື້ນຟູສຸຂະພາບ ລາວ (Lao Rehabilitation Founda- tion) ຈຶ່ງໄດ້ນຳເຄື່ອງອຸປະກອນການແພດໄປມອບໃຫ້ແກ່ 5 ໂຮງໝໍເມືອງ ຄື: ເມືອງຍອດອູ ສຳພັນ ບຸນໃຕ້ ໃໝ່ ແລະ ເມືອງຂວາ ແລະ ສຸກສາລາບ້ານຍໍ້ ຢູ່ສະຖານທີ່ດັ່ງກ່າວຕາມລຳດັບ ກາວຮັບໂດຍຕາງໜ້າຫ້ອງການສາທາລະນະສຸກ ແລະ ອຳນາດການປົກຄອງເມືອງ.

ອ່ານຕໍ່ໜ້າ ໗

ເຄື່ອງທີ່ນຳມາມອບໃນຄັ້ງນີ້ ປະກອບມີເຄື່ອງກວດຄື້ນກະແສໄຟຟ້າ ເຄື່ອງກວດຄື້ນກະແສໄຟຟ້າໃນຫົວໃຈ ເຄື່ອງຜະລິດອົກຊີແຊນ ໝໍ້ອົບໄຟຟ້າ ເຄື່ອງຕິດຕາມອາການຄົນເຈັບ ເຄື່ອງດູດຂີ້ສະເລດ ເຄື່ອງກວດເດັກນ້ອຍໃນແມ່ມານ ເຄື່ອງດູດຫູ ແລະ ເຄື່ອງມືທີ່ຈຳເປັນອື່ນໆ ຈຳນວນໜຶ່ງ ລວມມູນຄ່າ 91.000 ໂດລາສະຫະລັດ ຫຼື ປະມານ 728 ລ້ານກີບ.

ຈຸດປະສົງຂອງການມອບ-ຮັບເຄື່ອງດັ່ງກ່າວແມ່ນເພື່ອເປັນການຊ່ວຍພັດທະນາພື້ນຖານເຄື່ອງມືອຸປະກອນການແພດໃນລະດັບຂັ້ນໂຮງໝໍເມືອງຊ່ວຍຍົກລະດັບການບໍລິການຄົນເຈັບໃນໂຮງໝໍໃຫ້ດີຂຶ້ນ ພ້ອມກັບສ້າງຄວາມຍິນຍົງໃຫ້ແກ່ໂຮງໝໍຂັ້ນເມືອງ ແລະ ສຸກສາລາ.

ວັນທີ 09/03/2015